# ຄວາມບາບ, ຂ່າວປະເສີດ, ແລະ ພຣະບັນຍັດ



ບົດຮຽນທີ 9 ສຳລັບສະບາໂຕທີ 30 ເດືອນພຶດສະພາ 2026



“ຂ້ານ້ອຍຈະບໍ່ປະຖິ້ມຄຳແນະນຳ
ຂອງພຣະອົງຈັກເທື່ອ ເພາະຄຳແນະ
ນຳນັ້ນຊົງຊ່ວຍໃຫ້ຊີວິດແກ່ຂ້ານ້ອຍ,
ໂຜດຊ່ວຍຂ້ານ້ອຍໃຫ້ພົ້ນແດ່
ຂ້ານ້ອຍເປັນຂອງພຣະອົງ ແລະ
ຂ້ານ້ອຍພະຍາຍາມທີ່ຈະເຮັດຕາມ
ຂໍ້ຄຳສັ່ງຂອງພຣະອົງ”

(ພສສ 119:93, 94,)

ບໍ່ວ່າພວກເຮົາຈະຍອມຮັບຫລືບໍ່ກໍ່ຕາມ, ຄວາມບາບແມ່ນບັນຫາທີ່ສົ່ງຜົນກະທົບຕໍ່ພວກເຮົາທຸກຄົນ ແລະ ທຳລາຍຄວາມສຳພັນຂອງພວກເຮົາກັບພຣະເຈົ້າ: "ດັ່ງນັ້ນ, ທຸກຄົນໄດ້ເຮັດຜິດບາບ ແລະ ຂາດຈາກພຣະຣັດສະໝີຂອງພຣະເຈົ້າ" (ໂຣມ. 3:23).




ແລ້ວພວກເຮົາຈະສ້ອມແປງຊ່ອງຫວ່າງຈາກຄວາມບາບ ລະຫວ່າງພວກເຮົາກັບພຣະເຈົ້າໄດ້ແນວໃດ? ບາງຄົນໄດ້ສະເໜີທາງອອກທີ່ເປັນໄປໄດ້ສອງທາງສຳລັບແກ້ໄຂບັນຫານີ້: ພຣະບັນຍັດພຽງຢ່າງດຽວ (ລອດໂດຍການປະຕິບັດ, ເຊິ່ງເປັນຄວາມເຂົ້າໃຈຜິດກ່ຽວກັບໜ້າທີ່ຂອງພຣະບັນຍັດ); ຫລືວ່າ ພຣະຄຸນພຽງຢ່າງດຽວ? (ລອດໂດຍທາງຄວາມເຊື່ອ ແຕ່ບໍ່ປະຕິບັດ).

ຖ້າພວກເຮົາເຂົ້າໃຈຢ່າງຖືກຕ້ອງແລ້ວ ຈະຮູ້ວ່າ ພຣະບັນຍັດ ແລະ ພຣະຄຸນນັ້ນບໍ່ໄດ້ຂັດແຍ້ງກັນ, ແຕ່ທັງສອງຮ່ວມມືກັນໃນການກຳຈັດ ແລະ ຕໍ່ສູ້ຄວາມບາບເຊິ່ງທັງສອງມີໜ້າທີ່ໆແຕກຕ່າງກັນ



- ຫລີກລ້ຽງການລໍ້ລວງ
- ເຄັດລັບໃນການຫລີກລ້ຽງຄວາມບາບ

ຄວາມບາບ



- ພຣະບັນຍັດ ແລະ ຄວາມບາບ

ພຣະບັນຍັດ



- ຂ່າວປະເສີດ ແລະພຣະບັນຍັດ
- ສ້າງເຮືອນເທິງສີລາ

ຂ່າວປະເສີດ



# ຄວາມບາບ



# ຫລີກລ້ຽງການທົດລອງ

"ແຕ່ວ່າທຸກຄົນທີ່ຖືກລໍ້ລວງໃຫ້ຫລົງ ກໍຕໍ່ເມື່ອຄວາມປາຖະໜາຊົ່ວຊັກຈູງ ແລະ ຍົວະເຍົ້າໃຫ້ປະຕິບັດຕາມ." (ຢກບ 1:14 )



ທ່ານ ຢາໂກໂບ ໄດ້ເອີ້ນຜູ້ທີ່ຕໍ່ຕ້ານການທົດລອງວ່າ "ຜູ້ທີ່ໄດ້ຮັບພອນ" (ຢກບ 1:12). ແຕ່ເພິ່ນຊີ້ແຈງວ່າ ການທົດລອງນັ້ນບໍ່ໄດ້ມາຈາກພຣະເຈົ້າ (ຢກບ 1:13 ), ແຕ່ເກີດຈາກຄວາມປາຖະໜາອັນຊົ່ວຂອງຕົນເອງ (ຢກບ 1:14 ) .

ອຈ ໂປໂລ ກ່າວເຖິງ "ຜູ້ລໍ້ລວງ" (1 ທສລນ 3:5), ຜູ້ທີ່ພຣະເຢຊູກ່າວວ່າເປັນ ຊາຕານ (ມທ 4:3, 10). ມັນເປັນຜູ້ທີ່ຮູ້ວິທີໃຊ້ຈຸດອ່ອນຂອງພວກເຮົາເພື່ອນໍາພວກເຮົາໄປສູ່ຄວາມບາບໄດ້ດີທີ່ສຸດ. ຢ່າລືມວ່າພວກເຮົາກໍາລັງຢູ່ໃນສົງຄາມລະດັບຈັກກະວານລະຫວ່າງພຣະຄຣິດ ແລະ ຊາຕານ, ແລະ ຜູ້ທີ່ລໍ້ລວງຈະເຮັດທຸກວິທີທາງເພື່ອໃຫ້ພວກເຮົາຫັນອອກຈາກພຣະຄຣິດ







ແຊມຊັນ ເປັນຕົວຢ່າງທີ່ຊັດເຈນຂອງຄົນທີ່ຍອມຈໍານົນຕໍ່ການລໍ້ລວງໂດຍປ່ອຍໃຫ້ໂຕເອງຖືກຄອບງໍາໂດຍອາລົມ ເຖິງຈະຮູ້ວ່າສິ່ງເຫລົ່ານັ້ນຂັດຕໍ່ພຣະປະສົງຂອງພຣະເຈົ້າ (ພຜປຄ 14:1-3; 16:1, 4).

ແລ້ວຈະຫລີກລ້ຽງການລໍ້ລວງໄດ້ແນວໃດ? ໂດຍການສະແຫວງຫາພຣະເຈົ້າ (ມທ 6:33); ໃຊ້ເວລາສ່ວນໂຕກັບພຣະອົງ (ມລກ 14:38); ແລະ ຖືໂລ້ແຫ່ງຄວາມເຊື່ອ (ອຟຊ 6:16).

# ເຄັດລັບໃນການຫລີກລ້ຽງຄວາມບາບ

"ຖ້າຕາຂອງເຈົ້າເປັນຕົ້ນເຫດພາໃຫ້ເຮັດບາບ ກໍໃຫ້ຄວັດຕານັ້ນອອກຖິ້ມເສຍ ທີ່ຈະເຂົ້າໃນຣາຊອານາຈັກຂອງພຣະເຈົ້າດ້ວຍຕາເບື້ອງດຽວ ກໍດີກວ່າມີຕາສອງເບື້ອງແຕ່ຕ້ອງຖືກຖິ້ມລົງໃນໄຟນະຣົກ." (ມລກ 9:47)

ພຣະເຢຊູຊົງໃຫ້ຄຳແນະນຳທີ່ຊັດເຈນແກ່ພວກເຮົາເພື່ອຫລີກລ້ຽງຄວາມບາບ:



ຈົ່ງຫລີກລ້ຽງການເຮັດສິ່ງຕ່າງໆ ທີ່ອາດນຳໄປສູ່ຄວາມບາບ (ມລກ 9:43; ໂຢບ 23:12). ຕົວຢ່າງ: ການຊື້ສຸລາຢາເມົາ.

ຈົ່ງຫລີກລ້ຽງການໄປສະຖານທີ່ທີ່ພວກເຮົາອາດເຮັດຄວາມບາບໄດ້ (ມລກ 9:45; ໂຢບ 23:11). ຕົວຢ່າງ: ໄປທ່ຽວພັບ ທ່ຽວບາ.

ຈົ່ງຫລີກລ້ຽງການເບິ່ງສິ່ງທີ່ຈະນຳພວກເຮົາໄປສູ່ຄວາມບາບ. (ມລກ 9:47; ໂຢບ 31:1). ຕົວຢ່າງ: ເບິ່ງໜັງທີ່ບໍ່ເໝາະສົມ



ໂດຍສະຫລຸບ, ຈົ່ງເຮັດທຸກສິ່ງທຸກຢ່າງທີ່ຈະເຮັດໄດ້ ເພື່ອຫລີກລ້ຽງຄວາມບາບ ແລະ ການຖືກລໍ້ລວງ ຈົ່ງອະທິຖານກ່ຽວກັບເລື່ອງນີ້

1. ຢ່າຄິດວ່າ ຕົນເອງເພິ່ງພາຕົນເອງໄດ້(1 ກຣທ 10:12)
2. ເຊົາອວດວ່າຕົນເອງດີພຽງພໍ ຈົ່ງຖ່ອມໂຕຄືກັນກັບພຣະເຢຊູ (ມທ 6:2)
3. ເຮັດທຸກວິທີທາງ ທີ່ຈຳເປັນ ເພື່ອກຳຈັດຕັນຫາອອກຈາກໃຈ (ມທ 5:28-29)
4. ເຊົາວິພາກວິຈານ ແລະ ເຊົາຕັດສິນຄົນອື່ນ(1 ກຣທ 4:5)
5. ຢ່າກຽດຊັງສັດຕູຂອງທ່ານ ແຕ່ຈົ່ງອະທິຖານເພື່ອພວກເຂົາ (ມທ 5:44)
6. ຢ່າໂກດເຄືອງໃຫ້ຜູ້ຄົນທີ່ຢູ່ອ້ອມຂ້າງ (ມທ 5:22)


אנכי ה׳
לא יהיה
לא תשא
זכור את
כבד את
לא תרצח
לא תנאף
לא תגנב
לא תענה
לא תחמד

# ພຣະບັນຍັດ

# ພຣະບັນຍັດ ແລະ ຄວາມບາບ

“ທຸກຄົນທີ່ເຮັດບາບກໍມີຄວາມຜິດໃນຖານທີ່ຝ່າຝືນກົດບັນຍັດ ເພາະການບາບ ແມ່ນການຝ່າຝືນກົດບັນຍັດ.” (1 ຢຮ 3:4)





ຄວາມສຳພັນລະຫວ່າງພຣະບັນຍັດ ກັບຄວາມບາບນັ້ນຖືກຕີຄວາມໝາຍຜິດໂດຍຜູ້ຄົນທີ່ຄິດວ່າ ການປະຕິບັດພຣະບັນຍັດຈະຊ່ວຍໄຖ່ບາບຂອງພວກເຂົາໄດ້ (ຄລຕ 5:4). ຄວາມຄິດນີ້ເຮັດໃຫ້ບາງຄົນໄປສູ່ຄວາມກົງກັນຂ້າມກັບຄວາມຈິງ ເພາະຄິດວ່າພຣະບັນຍັດນັ້ນໄດ້ຖືກຍົກເລີກໄປແລ້ວ

ບັນຫາຢູ່ທີ່ການຄິດວ່າພຣະບັນຍັດກ່ຽວຂ້ອງກັບຄວາມລອດ ບໍ່ວ່າຈະຖານະທີ່ເປັນຫົນທາງຫລືອຸປະສັກຕໍ່ການໄດ້ຮັບຄວາມລອດ .. ແຕ່ວ່າໜ້າທີ່ຂອງພຣະບັນຍັດບໍ່ເຄີຍມີໄວ້ເພື່ອຄວາມລອດ, ແລ້ວໜ້າທີ່ຂອງພຣະບັນຍັດແມ່ນຫຍັງລະ?




ພຣະບັນຍັດເປີດເຜີຍຄວາມບາບໃຫ້ແກ່ພວກເຮົາ (1 ຢຮ 3:4). ຖ້າບໍ່ມີພຣະບັນຍັດແລ້ວພວກເຮົາຈະບໍ່ຮູ້ວ່າ ຄວາມບາບນັ້ນແມ່ນຫຍັງ (ໂຣມ 7:7) ແລະ ພວກເຮົາກໍ່ຈະບໍ່ສະແຫວງຫາທາງແກ້ໄຂ (ຄລຕ 3:24).

ພຣະບັນຍັດບໍ່ໄດ້ເປັນພາລະ ແຕ່ເປັນຮົ້ວປ້ອງກັນທີ່ຊ່ວຍປົກປ້ອງພວກເຮົາຈາກຜົນຮ້າຍຂອງຄວາມບາບ (1 ໂຢຮັນ 5:3; ພສສ 1:1-3).



# ຂ່າວປະເສີດ



# ຂ່າວປະເສີດແລະ ພຣະບັນຍັດ

“ໂດຍພວກເຮົາເຫັນວ່າ ຄົນໜຶ່ງຄົນໃດຈະຖືວ່າຊອບທຳໄດ້ ກໍຕ້ອງອາໄສຄວາມເຊື່ອ ນອກຈາກການປະຕິບັດຕາມກົດບັນຍັດ” (ໂຣມ 3:28)



ຄວາມລອດຂອງພວກເຮົາ (ການອະໄພບາບ ແລະ ຊີວິດນິຣັນດອນ) ໄດ້ຮັບມາ ໂດຍຜ່ານທາງພັນທະກິດຂອງພຣະເຢຊູ (ຄລຕ 3:13). ສິ່ງນີ້ກະຕຸ້ນພວກເຮົາໃຫ້ ຮັກພຣະເຢຊູ (1 ຢຮ 4:9, 19). ແລະ ພວກເຮົາຄວນສະແດງຄວາມຮັກນີ້ຕອບ ແທນ ໂດຍການຮັກສາພຣະບັນຍັດຂອງພຣະອົງ (ຢຮ 14:15).

ໃຫ້ພວກເຮົາທົບທວນລະຫວ່າງຄວາມສຳພັນຂອງພຣະບັນຍັດ ແລະ ຂ່າວ ປະເສີດ (ນັ້ນກໍ່ຄື ຄວາມລອດໂດຍຜ່ານທາງເລືອດຂອງພຣະເຢຊູ):

- ພຣະບັນຍັດ ເປີດເຜີຍ ວ່າຄວາມບາບ ແມ່ນຫຍັງ
- ເມື່ອພວກເຮົາເຮັດ ບາບ ພວກເຮົາ ຈະຖືກຕັດສິນໃຫ້ ໄດ້ຮັບຄວາມ ຕາຍນິຣັນ
- ພຣະບັນຍັດບໍ່ ສາມາດໃຫ້ ອະໄພຄວາມ ບາບຂອງພວກ ເຮົາໄດ້
- ພຣະເຢຊູຊົງທົນ ທຸກເຖິງແກ່ ຄວາມຕາຍ ເພື່ອຊົດໃຊ້ຄ່າ ຂອງຄວາມຕາຍ
- ເມື່ອພວກເຮົາ ຍອມຮັບເອົາພຣະ ເຢຊູເປັນຜູ້ຊ່ວຍ ຄວາມບາບກໍ່ຈະ ຖືກອະໄພ
- ເມື່ອໄດ້ຮັບການ ອະໄພບາບແລ້ວ, ພວກເຮົາກໍ່ຄວນ ຮັກສາພຣະບັນຍັດ ເປັນການຕອບແທນ

ພຣະເຢຊູບໍ່ໄດ້ຍົກເລີກພຣະບັນຍັດ (ມທ 5:17). ທັງພຣະບັນຍັດ ແລະ ພຣະຄຸນ ຕ່າງກໍ່ສະທ້ອນເຖິງລັກສະນະຂອງພຣະເຈົ້າ ນັ້ນກໍ່ຄື: ຄວາມຮັກ

# ຈົ່ງສ້າງເຮືອນຢູ່ເທິງສີລາ

"ດ້ວຍເຫດນັ້ນ ຜູ້ໃດທີ່ໄດ້ຍິນຖ້ອຍຄຳເຫລົ່ານີ້ຂອງເຮົາແລ້ວ ປະຕິບັດຕາມ ຄົນເຫລົ່ານັ້ນກໍເປັນເໝືອນຄົນສະຫລາດທີ່ປຸກເຮືອນຂອງຕົນຢູ່ເທິງດານຫີນ." (ມທ 7:24)



ການຍອມຮັບເອົາພຣະເຢຊູ ແມ່ນເປັນຂະບວນການຄື: ທຳອິດ ແມ່ນຄວາມຮູ້, ພວກເຮົາຕ້ອງຮູ້ວ່າ ພວກເຮົາມີບາບ ແລະ ມີຜູ້ໄຖ່ບາບ
(ໂຣມ. 10:14).

ແຕ່ຄວາມຮູ້ຢ່າງດຽວບໍ່ສາມາດຊ່ວຍພວກເຮົາລອດໄດ້. ພຣະເຢຊູຊົງປຽບທຽບຜູ້ທີ່ໄດ້ຮັບຄວາມຮູ້ ເລື່ອງຄວາມລອດ ແຕ່ບໍ່ນຳໄປປະຕິບັດ, ຄືກັນກັບຄົນທີ່ສ້າງເຮືອນຢູ່ເທິງດິນຊາຍ ແລ້ວກໍພັງທະລາຍລົງ" (ມທ. 7:26-27).





ຄວາມຮູ້ ຕ້ອງຄຽງຄູ່ໄປກັບການປະຕິບັດ
(ມທ 7:24-25). ພວກເຮົາໄດ້ຮັບການຊຳລະໃຫ້ເປັນຄົນຊອບທຳ ໂດຍປາສະຈາກການເຮັດຕາມພຣະບັນຍັດ (ໂຣມ. 3:28), ແຕ່ວ່າມັນຍັງມີຄວາມຈຳເປັນທີ່ຕ້ອງໄດ້ເຫັນການປະຕິບັດເຫລົ່ານັ້ນໃນຊີວິດຂອງພວກເຮົາ ເຊິ່ງເປັນຜົນມາຈາກການໄດ້ຮັບຄວາມລອດຂອງພວກເຮົາ(ມທ. 7:18-21).

ເມື່ອພວກເຮົາຍອມຮັບເອົາພຣະເຢຊູແລ້ວ ແລະ ດຳເນີນຊີວິດຢ່າງໃກ້ຊິດກັບພຣະອົງ, ຮັກສາພຣະບັນຍັດຂອງພຣະອົງ ພວກເຮົາກໍຕັ້ງໝັ້ນ, ສ້າງເຮືອນຢູ່ເທິງສີລາ

“ພຣະບັນຍັດເປີດເຜີຍຄວາມບາບຂອງມະນຸດ ແຕ່ບໍ່ໄດ້ໃຫ້ອະໄພໃດໆ. ໃນຂະນະທີ່ພຣະບັນຍັດສັນຍາມອບຊີວິດໃຫ້ແກ່ຜູ້ທີ່ເຊື່ອຟັງ ແຕ່ກັບປະກາດວ່າ ຄວາມຕາຍເປັນສ່ວນຂອງຜູ້ທີ່ລະເມີດ, ພຣະຄຸນຂອງພຣະຄຣິດເທົ່ານັ້ນທີ່ຈະປົດປ່ອຍມະນຸດອອກຈາກການຖືກລົງໂທດ ຫລື ມົນທິນແຫ່ງຄວາມບາບໄດ້. ມະນຸດຜູ້ທີ່ລະເມີດພຣະບັນຍັດຂອງພຣະອົງຕ້ອງໄດ້ກັບໃຈ ແລະ ມີຄວາມເຊື່ອໃນພຣະຄຣິດ ຜູ້ຊົງເປັນເຄື່ອງບູຊາໄຖ່ບາບໃຫ້ແກ່ມະນຸດ. ເພາະແບບນີ້ເອງ ມະນຸດ ຈຶ່ງໄດ້ຮັບການຍົກໂທດບາບທີ່ຜ່ານມາ ແລະ ການເປັນຜູ້ມີສ່ວນໃນພຣະລັກສະນະຂອງພຣະເຈົ້າ.

EGW (The Great Controversy, p. 467)